**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ 155/ສພຂ.ຊຍ
ໄຊຍະບູລີ, ວັນທີ 30 ທັນວາ 2024

# ມະຕິ
## ກອງປະຊຸມສະພາປະຊາຊົນ ແຂວງໄຊຍະບູລີ
## ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃນໄລຍະຜ່ານມາ ແລະ ທິດທາງແຜນການ ປີ 2025, ຄາດໝາຍສູ້ຊົນຮອດປີ 2030

- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງໃນໄລຍະຜ່ານມາ ແລະ ທິດທາງແຜນການ ປີ 2025, ຄາດໝາຍສູ້ຊົນ 5 ປີ (2026-2030) ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II.

ຜ່ານການຄົ້ນຄວ້າ, ພິຈາລະນາ, ປະກອບຄຳຄິດຄຳເຫັນຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃນໄລຍະຜ່ານມາ.

## ກອງປະຊຸມ ຕົກລົງ:

**ມາດຕາ 1: ຮັບຮອງເອົາຜົນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຂອງອົງການປົກແຂວງໃນໄລຍະຜ່ານມາ**

ກອງປະຊຸມສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບສູງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃນໄລຍະຜ່ານມາ; ການສ້າງແຂວງເປັນຫົວໜ່ວຍຍຸດທະສາດຕາມ 7 ດ້ານ 66 ຕົວຊີ້ບອກ ສາມາດບັນລຸ 80% ຂຶ້ນໄປ ມີ 5 ດ້ານ; ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານຕາມ 5 ດ້ານ 47 ຕົວຊີ້ບອກ ສາມາດບັນລຸ 80% ທັງ 5 ດ້ານ ມີ 7 ເມືອງ ຄື: ①ເມືອງ ຄອບ ②ເມືອງເງິນ ③ເມືອງຫົງສາ ④ເມືອງໄຊຍະບູລີ ⑤ເມືອງທົ່ງມີໄຊ ⑥ເມືອງປາກລາຍ ⑦ ເມືອງແກ່ນທ້າວ; ການສ້າງບ້ານເປັນຫົວໜ່ວຍພັດທະນາຕາມ 4 ດ້ານ 30 ຕົວຊີ້ບອກ ສາມາດບັນລຸ 80% ທັງ 4 ດ້ານ ມີ 369 ບ້ານ ເທົ່າກັບ 85% ຂອງຈຳນວນບ້ານທັງໝົດໃນທົ່ວແຂວງ.

**- ວຽກງານ 3 ສ້າງ ຕິດພັນກັບວຽກງານ ກໍ່ສ້າງຮາກຖານການເມືອງ:** ທົ່ວຮາກຖານການເມືອງຂອງພັກ ແມ່ນມີຄວາມໜັກແໜ້ນເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ທົ່ວແຂວງ ມີຮາກຖານພັກທັງໝົດ 1,376 ຮາກຖານ ໃນນີ້ ຄະນະພັກຮາກຖານ 83 ຄະນະພັກຮາກຖານ, ມີໜ່ວຍພັກທັງໝົດ 876 ໜ່ວຍ, ມີໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ 417 ໜ່ວຍພັກ, ມີສະມາຊິກພັກທັງໝົດ 20,910 ສະຫາຍ, ຍິງ 6,023 ສະຫາຍ, ສຳຮອງ 858 ສະຫາຍ, ຍິງ 278 ສະຫາຍ.

**- ວຽກງານ 3 ສ້າງ ຕິດພັນກັບການພັດທະນາຊົນນະບົດແກ້ໄຂຄວາມທຸກຍາກ:** ສ້າງຄອບຄົວພົ້ນທຸກບັນລຸໄດ້ 58,434 ຄອບຄົວ ກວມ 72,74%, ຄອບຄົວບໍ່ພົ້ນທຸກ 21,902 ຄອບຄົວ ເທົ່າກັບ



Scanned with CamScanner
CamScanner

27,26%, ຄອບຄົວບັນລຸມາດຕະຖານພັດທະນາມີ 46,616 ຄອບຄົວ ກວມ 58,03%, ຄອບຄົວບໍ່ບັນລຸມາດຕະຖານພັດທະນາມີ 33,720 ຄອບຄົວ ເທົ່າກັບ 41,97%, ບ້ານພົ້ນທຸກມີ 327 ບ້ານ ກວມ 76,05%, ບ້ານບໍ່ພົ້ນທຸກມີ 103 ບ້ານ ເທົ່າກັບ 23,95%, ມີເມືອງພົ້ນທຸກ 8 ເມືອງ ກວມ 72,72%.

**- ວຽກງານ 3 ສ້າງ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ:** ຜ່ານຂະບວນການຕົວຈິງ ສາມາດຄັດເລືອກບຸກຄົນ, ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ແລະ ໄດ້ຮັບການປະທັບດນະໂຍບາຍຕ່າງໆເຊັ່ນ: ຫຼຽນໄຊແຮງງານຊັ້ນ I: ຈຳນວນ 81 ທ່ານ, 7 ກົມກອງ ແລະ 8 ບ້ານ; ຫຼຽນໄຊແຮງງານຊັ້ນ II: ຈຳນວນ 140 ທ່ານ, 3 ກົມກອງ ແລະ 132 ບ້ານ; ຫຼຽນໄຊແຮງງານຊັ້ນ III: ຈຳນວນ 331 ທ່ານ, 9 ກົມກອງ, 9 ເມືອງ, 16 ບ້ານ ແລະ 1 ຄອບຄົວ; ຫຼຽນກາແຮງງານ: ຈຳນວນ 735 ທ່ານ, 16 ກົມກອງ, 2 ເມືອງ, 36 ບ້ານ, 7 ຄອບຄົວ ແລະ 4 ຜູ້ປະກອບການ; ໃບຍ້ອງຍໍລັດຖະບານ: ຈຳນວນ 2,158 ທ່ານ, 136 ບ້ານ ແລະ 36 ຜູ້ປະກອບການ.

**ມາດຕາ 2: ຮັບຮອງເອົາທິດທາງແຜນການວຽກງານ 3 ສ້າງ ປີ 2025 ແລະ ຄາດໝາຍສູ້ຊົນ 5 ປີ (2026- 2030)**

ກອງປະຊຸມສະໄໝສາມັນ ເທື່ອທີ 8 ສະພາປະຊາຊົນແຂວງໄດ້ມີຄວາມເອກະພາບ ແລະ ຮັບຮອງເອົາທິດທາງແຜນການວຽກງານ 3 ສ້າງ ປີ 2025 ແລະ ຄາດໝາຍສູ້ຊົນ 5 ປີ (2026-2030) ດັ່ງນີ້:

**2.1. ທິດທາງແຜນການວຽກງານ 3 ສ້າງ ປີ 2025**

1). ຊຸກຍູ້ບັນດາດ້ານ ແລະ ຕົວຊີ້ບອກການສ້າງແຂວງເປັນຫົວໜ່ວຍຍຸດທະສາດທີ່ຍັງບໍ່ທັນບັນລຸ 80% ຂຶ້ນໄປ ໃຫ້ສາມາດບັນລຸຢ່າງໜ້ອຍ 3 ຕົວຊີ້ບອກ ຄື: ຕົວຊີ້ບອກທີ 2.9 ຈຳນວນເມືອງທີ່ມີການຈັດຕັ້ງການບໍລິການຜ່ານປະຕູດຽວກວມເອົາ 70% ຂອງຈຳນວນເມືອງພາຍໃນແຂວງ; ຕົວຊີ້ບອກທີ 7.3 ຕ້ອງສ້າງເມືອງປ້ອງກັນຊາດ-ປ້ອງກັນຄວາມສະຫງົບເຂັ້ມແຂງໃຫ້ໄດ້ 95% ຂຶ້ນໄປຂອງຈຳນວນເມືອງທັງໝົດ ແລະ ຕົວຊີ້ບອກທີ່ 7.5 ເມືອງໃນທົ່ວແຂວງຕ້ອງຖືກຮັບຮອງເປັນເມືອງຫົວໜ່ວຍເຂັ້ມແຂງດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກວມ 80% ຂຶ້ນໄປ;

2). ຊຸກຍູ້ບັນດາເມືອງທີ່ບັນລຸ 5 ດ້ານ ແລະ 47 ຕົວຊີ້ບອກໃຫ້ໄດ້ຮັບຮອງປະກາດ ແລະ ຢັ້ງຢືນເປັນເມືອງຫົວໜ່ວຍເຂັ້ມແຂງຮອບດ້ານ ຈຳນວນ 3 ເມືອງ ຄື: ເມືອງໄຊຍະບູລີ, ເມືອງເງິນ ແລະ ເມືອງປາກລາຍ.

3). ຊຸກຍູ້ບັນດາເມືອງປະເມີນ ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ບັນລຸ 5 ດ້ານ 47 ຕົວຊີ້ບອກໃຫ້ບັນລຸ 80% ຂຶ້ນໄປໃຫ້ໄດ້ 4 ເມືອງ ຄື: ເມືອງຄອບ, ເມືອງຫົງສາ, ເມືອງແກ່ນທ້າວ ແລະ ເມືອງທົ່ງມີໄຊ;

4). ຊຸກຍູ້ສ້າງບ້ານເປັນຫົວໜ່ວຍພັດທະນາຕາມ 4 ດ້ານໃຫ້ບັນລຸ 80% ເພີ່ມຕື່ມ 10 ບ້ານ ຂອງຈຳນວນບ້ານທີ່ບໍ່ທັນບັນລຸ;

5). ຈັດກອງປະຊຸມສະຫຼຸບຕີລາຄາ, ຖອດຖອນບົດຮຽນວຽກງານ 3 ສ້າງ ຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ, ວຽກງານພັດທະນາຊົນນະບົດຮອບດ້ານແກ້ໄຂຄວາມທຸກຍາກ ແລະ ວຽກງານຂະບວນການແຂ່ງຂັນຍ້ອງຍໍ ຮັກຊາດ ແລະ ພັດທະນາ ຮ່ວມກັບພະແນກການ, ອົງການ ແລະ ກົມກອງທີ່ກ່ຽວຂ້ອງ.

**2.2. ຄາດໝາຍສູ້ຊົນ 5 ປີ (2026-2030)**

1). ຊຸກຍູ້ບັນດາພະແນກການ, ອົງການທີ່ມີສ່ວນພົວພັນກັບຕົວຊີ້ບອກ ໃຫ້ມີການ ເຄື່ອນໄຫວ, ຕິດຕາມ, ກວດກາປະເມີນຜົນສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ ໃຫ້ບັນລຸ 80% ຂຶ້ນໄປໃຫ້ໄດ້ທັງ 7 ດ້ານ 66 ຕົວຊີ້ບອກ ແລະ ໃຫ້ໄດ້ຮັບຮອງ, ປະກາດ ຢັ້ງຢືນ ເປັນແຂວງຫົວໜ່ວຍຍຸດທະສາດ;

2). ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ໃຫ້ໄດ້ຮັບຮອງ, ປະກາດ ຢັ້ງຢືນ ເປັນເມືອງເຂັ້ມແຂງຮອບດ້ານໃຫ້ໄດ້ຕື່ມ 7 ເມືອງ ລວມເປັນ 10 ເມືອງ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໃຫ້ຮັບຮອງ, ປະກາດ ຢັ້ງຢືນຢ່າງໜ້ອຍໃຫ້ໄດ້ 40 ບ້ານຂອງຈຳບ້ານທີ່ບໍ່ທັນບັນລຸ;

3). ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໃນໄລຍະໃໝ່ ໃຫ້ສອດຄ່ອງກັບທິດທາງໃນຕໍ່ໜ້າໃນການຜັນຂະຫຍາຍມະຕິເລກທີ 05/ຄບສພ ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ ເຂົ້າສູ່ລວງເລິກ, ສ້າງການ



Scanned with CamScanner
CamScanner

ຫັນປ່ຽນທີ່ແຂງແຮງຢ່າງເລິກເຊິ່ງ ແລະ ຮອບດ້ານໂດຍຕິດພັນກັບວຽກງານ 3 ສ້າງ;

4). ບັນດາດ້ານ ແລະ ຕົວຊີ້ບອກທີ່ບັນລຸແລ້ວແມ່ນໃຫ້ເສີມຂະຫຍາຍກາຍເປັນຕົວແບບໃຫ້ແກ່ຕົວຊີ້ບອກອື່ນ;

5). ປະສານງານລະຫວ່າງວຽກງານ 3 ສ້າງ, ວຽກງານກໍ່ສ້າງຮາກຖານການ ເມືອງ, ວຽກງານພັດທະນາຊົນນະບົດຮອບດ້ານ ແກ້ໄຂຄວາມທຸກຍາກ, ໃຫ້ 3 ພາກສ່ວນເຄື່ອນໄຫວກົມກຽວ ມີຄວາມເປັນເອກະພາບ ຊ່ວຍຊູ້ຢູ່ໜູນເຊິ່ງກັນ ແລະ ກັນ.

**ມາດຕາ 3: ມາດຕະການຈັດຕັ້ງປະຕິບັດ**

ມອບໃຫ້ອົງການປົກຄອງແຂວງ, ຫ້ອງວ່າການແຂວງ, ພະແນກພາຍໃນ, ພະແນກແຜນການ ແລະ ການລົງທຶນ, ພະແນກການ, ອົງການ, ກົມກອງທີ່ກ່ຽວຂ້ອງແຂວງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ II.

ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຄະນະກຳມະການທີ່ກ່ຽວຂ້ອງ ຂອງສະພາປະຊາຊົນແຂວງ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ ໃຫ້ມີປະສິດທິພາບ, ປະສິດທິຜົນ.

**ມາດຕາ 4: ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັບ ຄຳພັນເພັງ



Scanned with CamScanner
CamScanner